GCI

# ບົດທີ 7
# ການປະກາດ

<u>ບົດນຳ</u>:

ວັດຖຸປະສົງຂອງການສຶກສາ:

- ເພື່ອສຶກສາຄວາມໝາຍ ແລະພື້ນຖານທາງພະຄຳພີກ່ຽວກັບການປະກາດ.
- ເພື່ອສຶກສາພື້ນຖານຂອງການປະກາດ.
- ເພື່ອສຶກສາກົນລະຍຸດການປະກາດຂອງອາຈານໂປໂລ ແລະຂອງພະເຢຊູຄຣິດ.

<u>ໂຄງຮ່າງບົດຮຽນ</u>

I. ບົດນຳ

ກ. ອັນໃດທີ່ບໍ່ແມ່ນການປະກາດ.
ຂ. ການປະກາດຄືອັນໃດ.
ຄ. ເປັນຫຍັງຜູ້ເຊື່ອຈຶ່ງບໍ່ມີສ່ວນຮ່ວມໃນການປະກາດ.

II. ຫລັກສາດສະໜາສາດແຫ່ງການປະກາດ

ກ. ການປະກາດເປັນຄວາມຄິດຂອງພະເຈົ້າ.
ຂ. ການປະກາດ ແລະພັນທະສັນຍາໃໝ່.
ຄ. ກຸນແຈຫລັກໃນການປະກາດ.

III. ພື້ນຖານຂອງການປະກາດ

ກ. ຄວາມສຳຄັນໃນການປະກາດ.
ຂ. ສິ່ງທີ່ຈະຕ້ອງມີຂັ້ນພື້ນຖານຂອງຜູ້ເຊື່ອໃນການທີ່ຈະປະກາດ.

IV. ການປະກາດແບບເປັນສ່ວນນຶ່ງຂອງຊີວິດ

ກ. ພະເຢຊູຊົງເປັນແບບຢ່າງທີ່ດີທີ່ສຸດໃນການປະກາດ.
ຂ. ກຸນແຈແຫ່ງການປະກາດ.
ຄ. ການປະກາດ ແລະຄຣິສຕະຈັກ.

GCI

# I. ບົດນຳ

ສິ່ງທີ່ເຂົ້າມາໃນໃຈເປັນອັນດັບທຳອິດ ເມື່ອທ່ານຄິດເຖິງຄຳວ່າ "ການປະກາດ" ຄືອັນໃດ?

ເປັນຜູ້ປະກາດທີ່ມີຊື່ສຽງຫລາຍ ?

ການປະກາດນັ້ນເປັນສຳລັບຜູ້ຊ່ຽວຊານເທົ່ານັ້ນຫລືບໍ່ ຫລື ສຳລັບຄຣິສຕຽນທົ່ວໄປ?

## ກ. ການປະກາດ **ບໍ່**ແມ່ນອັນໃດແດ່?

1. ການປະກາດ ບໍ່ແມ່ນພຽງແຕ່ເຮັດໃຫ້ຕັ່ງຢູ່ເຕັມໃນ**ໂບດ.**

2. ການປະກາດ ບໍ່ແມ່ນເປັນນັກເທດປະກາດຜູ້ຍິ່ງໃຫຍ່ທີ່ປະກາດຢູ່ໃນ**ຫ້ອງໂຖງ.**

3. ການປະກາດ ບໍ່ແມ່ນກິຈະກຳທີ່ຈະເຮັດໂດຍ**ສິດຍາພິບານ**ໃນຕຶກອາຄານທີ່ເອີ້ນວ່າ ຄຣິສຕະຈັກ.

4. ການປະກາດ ບໍ່ແມ່ນເປັນ**ລາຍການ**ຂອງຄຣິສຕະຈັກໃນແຕ່ລະປີ.

5. ການປະກາດ ບໍ່ແມ່ນເປັນ "ຄຳເວົ້າ" ຫລື "ຖ້ອຍຄຳ" ຢ່າງດຽວ.

## ຂ. ການປະກາດ ຄືອັນໃດ?

1. C.H. Spurgeon ເປັນນັກເທດຄົນອັງກິດເປັນຜູ້ມີຊື່ສຽງໃນສັດຕະວັດ ທີ19 ແລະເປັນຜູ້ປະກາດໄດ້ໃຫ້ຄຳນິຍາມຂອງການປະກາດວ່າ:

   "ຂໍທານຄົນນຶ່ງບອກຂໍທານອີກຄົນນຶ່ງວ່າ ຈະໄປບ່ອນໃດຈຶ່ງຈະມີອາຫານແຫ່ງຊີວິດ"

   ແມ່ນແລ້ວ ພະເຢຊູຊົງເປັນອາຫານແຫ່ງຊີວິດ " ຂໍເຊີນຊີມເບິ່ງແລ້ວຈະເຫັນວ່າ ພະເຈົ້າປະເສີດ" ເພງສັນລະເສີນ 34:8

2. ທ່ານ ວິນລຽມ ປະເທດອັງກິດໄດ້ນິຍາມຄຳວ່າ "ປະກາດ" ໄວ້ດັ່ງນີ້:

   "ການປະກາດ ຄື ການສຳແດງພະເຢຊູໃນລິດທານຸພາບຂອງພະວິນຍານບໍລິສຸດວ່າ ມະນຸດທັງຫລາຍຈະຕ້ອງວາງໃຈໃນພະເຈົ້າຜ່ານທາງພະເຢຊູທີ່ຈະຍອມຮັບພະອົງເປັນພະຜູ້ຊ່ອຍໃຫ້ພົ້ນແລະຮັບໃຊ້ພະອົງໃນຖານະກະສັດໃນຊີວິດພ້ອມກັບການມີສາມັກຄີທຳກັບຄຣິສຕຽນ ຄົນ ອື່ນໆ ໃນຄຣິສຕະຈັກຂອງພະເຈົ້າ"

   ກ) ການປະກາດຈະຕ້ອງມີເລື່ອງຂອງຂ່າວປະເສີດເຂົ້າມາກ່ຽວຂ້ອງ ຊຶ່ງເປັນຂ່າວປະເສີດຂອງອົງພະເຢຊູຄຣິດ

   ຂ) ການປະກາດຈະຕ້ອງມີງານຂອງພະວິນຍານບໍລິສຸດເຂົ້າມາກ່ຽວຂ້ອງ

   ຄ) ການປະກາດຈະຕ້ອງມີການຍອມຮັບອົງພະເຢຊູຄຣິດເປັນພະຜູ້ຊ່ອຍໃຫ້ພົ້ນເຂົ້າມາກ່ຽວຂ້ອງ

GCI

ງ) ການປະກາດຈະຕ້ອງມີເລື່ອງຂອງການຮ່ວມສາມັກຄີທຳກັບຄຣິສຕຽນອື່ນໆເຂົ້າມາກ່ຽວຂ້ອງ

ຈ) ການປະກາດຈະຕ້ອງມີການຮັບໃຊ້ພະເຈົ້າເຂົ້າມາກ່ຽວຂ້ອງ

## ຄ. ເປັນຫຍັງຜູ້ເຊື່ອຫລາຍຄົນຈຶ່ງບໍ່ມີສ່ວນກ່ຽວຂ້ອງກັບການປະກາດ

1. ພວກເຂົາເຊື່ອວ່າບໍ່ໄດ້ເປັນງານຂອງເຂົາ ແລະເຂົານັ້ນໄດ້ຈ່າຍເງິນເພື່ອທີ່ຈະຈ້າງ**ສິດຍາພິບານຜູ້ປະກາດ**ມາເຮັດວຽກສ່ວນນີ້ຢູ່ແລ້ວ

   *2 ຕີໂມທຽວ 4:5 ແຕ່ຝ່າຍເຈົ້າ, ຈົ່ງລະວັງຕົວໃຫ້ດີໃນການທັງປວງ ຈົ່ງອົດທົນຕໍ່ການຍາກລຳບາກ ຈົ່ງເຮັດໜ້າທີ່ຂອງຜູ້ປະກາດຂ່າວປະເສີດ ແລະຈົ່ງປະຕິບັດໜ້າທີ່ການຂອງເຈົ້ານັ້ນໃຫ້ສຳເລັດ.*

   ບໍ່ແມ່ນທຸກຄົນທີ່ຈະຖືກເອີ້ນວ່າເປັນຜູ້ປະກາດແຕ່ເຮົາຖືກເອີ້ນໃຫ້ເປັນພະຍານຝ່າຍພະອົງ ກິຈະການ 1:8

2. ພວກເຂົານັ້ນບໍ່ແນ່ໃຈຕົວເອງວ່າ ພວກເຂົາເຊື່ອອັນໃດ ແລະເຊື່ອໃຜ

3. ພວກເຂົາມີ**ຄວາມຢ້ານ**ຢູ່ໃນໃຈ

## II. ຫລັກສາດສະສາດແຫ່ງການປະກາດ

ກ. ການປະກາດນັ້ນເປັນແນວຄວາມຄິດມາຈາກ**ພະເຈົ້າ**

1. ປະຖົມມະການ 3:9 "ອາດາມ.. ເຈົ້າຢູ່ບ່ອນໃດ?"

   ພະເຈົ້າພະຜູ້ໄຖ່ໄດ້**ສະແຫວງຫາ**ຜູ້ທີ່ຫລົງຫາຍຕັ້ງແຕ່ທຳອິດ
   "ແລະພະເຈົ້າໄດ້ຊົງຮ້ອງຫາມະນຸດວ່າ 'ເຈົ້າຢູ່ໃສ?'"

2. ປະຖົມມະການ 3:14–15 ເປັນຄຳສັນຍາທີ່ກ່ຽວຂ້ອງກັບພະເມຊີອາ ຜູ້ຊຶ່ງຈະເປັນ**ພະຜູ້ຊ່ອຍໃຫ້ພົ້ນ**ທີ່ຈະມາເຖິງ.

   *"ເບິ່ງເຖີດ ວັນນີ້ພະອົງຊົງຂັບໄລ່ຂ້າພະອົງອອກຈາກບ່ອນດິນພົ້ນຈາກພະພັກພະອົງໄປ ຂ້າພະອົງຈະຕ້ອງຫລົບໜີ ແລະພະເນຈອນໄປໃນໂລກ ໃຜພົບຂ້າພະອົງກໍຈະຂ້າຂ້າພະອົງເສັຽ ພະເຈົ້າຕຣັດແກ່ກາອິນວ່າ "ບໍ່ໄດ້ ຜູ້ໃດຂ້າກາອິນ ຈະມີໂທດເຈັດເທົ່າ" ແລ້ວພະເຈົ້າຊົງເຮັດເຄື່ອງໝາຍໄວ້ທີ່ຕົວກາອິນ ເພື່ອວ່າເມື່ອໃຜພົບຈະໄດ້ບໍ່ຂ້າ"*

3. ປະຖົມມະການ12:1-3 ການຊົງເອີ້ນຂອງພະເຈົ້າໃນການເອີ້ນ**ອັບຣາຮາມ** ເປັນການວາງແຜນຂອງພະເຈົ້າທີ່ຈະນຳພະເມຊີອາຜ່ານທາງເຊື້ອສາຍຂອງອັບຣາຮາມພະເຈົ້າ ກ່າວແກ່ອັບລາຮາມ

   *"ເຈົ້າຈົ່ງອອກຈາກເມືອງ ຈາກຍາດ ພີ່ນ້ອງ ຈາກບ້ານບິດາຂອງເຈົ້າ ໄປຍັງດິນແດນທີ່ເຮົາຈະບອກໃຫ້ເຈົ້າຮູ້ ເຮົາຈະໃຫ້ເຈົ້າເປັນຊົນຊາດໃຫຍ່ ເຮົາຈະ ອວຍພອນແກ່ເຈົ້າຈະໃຫ້ເຈົ້າມີຊື່ສຽງໃຫຍ່ໂຕ ເລື່ອງລືໄປແລ້ວຈະຊ່ອຍໃຫ້ຜູ້ອື່ນໄດ້ຮັບພອນ ເຮົາຈະອຳນວຍພອນ ແກ່ຄົນທີ່ອວຍພອນເຈົ້າ ເຮົາຈະສາບຄົນທີ່ແຊ່ງເຈົ້າ ບັນດາເຜົ່າພັນທົ່ວໂລກຈະໄດ້ພອນເພາະເຈົ້າ"*

GCI

4. ພະເຈົ້າຜູ້ຊົງເປັນ**ຕຣີເອກະນຸພາບ**ໄດ້ມີສ່ວນກ່ຽວຂ້ອງກັບການປະກາດ ພະບິດາໄດ້ຊົງສົ່ງພະບຸດຂອງພະອົງພ້ອມ.

ກັບຂ່າວປະເສີດ ແລະລິດອຳນາດຂອງພະວິນຍານບໍລິສຸດ ເພື່ອເປັນຜູ້ຊ່ວຍໃນການປະກາດ

*ເພາະວ່າພະເຈົ້າຊົງຮັກໂລກ ຈົນໄດ້ຊົງປະທານພະບຸດອົງດຽວຂອງພະອົງ ເພື່ອທຸກຄົນທີ່ວາງໃຈໃນ ພະບຸດນັ້ນຈະບໍ່ພິນາດ ແຕ່ມີຊີວິດອັນຕະຫລອດໄປເປັນນິດ. ໂຢຮັນ 3:16*

*ພະອົງໄດ້ຊົງຊ່ວຍເຮົາໃຫ້ພົ້ນ ບໍ່ແມ່ນດ້ວຍການກະທຳທີ່ຊອບທຳຂອງເຮົາເອງ ແຕ່ພະອົງຊົງພະກະລຸນາ ຊຳລະໃຫ້ເຮົາມີໃຈບັງເກີດໃຫມ່ ແລະຊົງສ້າງເຮົາຂຶ້ນມາໃຫມ່ ໂດຍພະວິນຍານບໍລິສຸດ ຕີໂຕ 3:5*

## ຂ. ການປະກາດ ແລະພະຄຳພີພາກພັນທະສັນຍາໃຫມ່

1. **ຂ່າວປະເສີດ**ທັງສີ່ເຫລັ້ມມາຈາກຄຳກຣີກຄຳວ່າ Evangelion ແລະມີຮາກສັບມາຈາກຄຳພາສາອັງກິດ “Evangelism”

2. ໃນ**ວັນເພັນເຕຄອສເຕ** ເປັນການປະກາດແບບພື້ນຟູເປັນຄັ້ງທຳອິດ

   - ມີຄົນ 3000 ຄົນກັບໃຈໃຫມ່ໃນວັນດຽວ

   *“ຄົນເຫລົ່ານັ້ນທີ່ຮັບຄຳຂອງເປໂຕກໍຮັບບັບຕິສມາໃນວັນນັ້ນມີຄົນເຂົ້າເປັນສາວົກປະມານສາມພັນຄົນ” ກິຈະການ 2:41*

   ກິຈະການ 4:4 ,“ ເຮົາເຫັນວ່າ ຄຣິສຕະຈັກຍຸດທຳອິດເຕີບໃຫຍ່ຂື້ນອີກຫລາຍພັນຄົນ”

3. **ຟີລິບ**ເປັນຜູ້ປະກາດ ໄດ້ນຳຂ່າວປະເສີດມາສູ່ຊາວສະມາເລັຽ

   ກ) *ຝ່າຍສິດທັງຫລາຍຊຶ່ງກະຈັດກະຈາຍໄປກໍທ່ຽວປະກາດພະວັດຈະນະນັ້ນ ສ່ວນຟີລິບກໍໄປຍັງເມືອງນຶ່ງໃນ ແຄ້ວນຊາມາເລັຽແລະປະກາດເລື່ອງພະຄຣິດໃຫ້ຊາວເມືອງນັ້ນຟັງ ປະຊາຊົນກໍພ້ອມໃຈກັນຟັງຖ້ອຍຄຳທີ່ ຟີລິບໄດ້ປະກາດເພາະເຂົາໄດ້ຍິນທ່ານເວົ້າ ແລະໄດ້ເຫັນໝາຍສຳຄັນຊຶ່ງທ່ານໄດ້ກະທຳນັ້ນດ້ວຍວ່າຜີໂສ ໂຄກທີ່ສິງຢູ່ໃນຄົນຫລາຍຄົນໄດ້ພາກັນຮ້ອງດ້ວຍສຽງດັງແລ້ວອອກມາຈາກຄົນເຫລົ່ານັ້ນ ແລະຄົນທີ່ເປັນ ໂລກອຳມະພາດກັບຄົນງ່ອຍ ກໍຫາຍເປັນປົກກະຕິ ຈຶ່ງເກີດຄວາມປິ້ມປີຕິຍ່າງຍິ່ງໃນເມືອງນັ້ນ. ກິຈະການ 8:4-8*

   ຂ) ເຂົາໄດ້ເປີດເຜີຍຂ່າວປະເສີດນັ້ນໃຫ້ແກ່ຄົນເທືອຍຊາວເອຕີໂອເປັຽ ກິຈະການ 8:26-40

   ຟີລິບຈຶ່ງແລ່ນເຂົ້າໄປໃກ້ ແລະໄດ້ຍິນທ່ານອ່ານໜັງສືເອຊາຢາຜູ້ປະກາດພະທຳ ຈຶ່ງຖາມວ່າ “ຊຶ່ງທ່ານອ່ານນັ້ນທ່ານເຂົ້າໃຈຫລືບໍ່? ” (ກິຈະການ 8:30)

GCI

4. ເປໂຕ ແລະການປະກາດ ກິຈະການ 10: 9-16

*"ຄັນເປໂຕເຂົ້າໄປ ໂຄເນລີໂອກໍຕ້ອນຮັບເປໂຕ ແລະໝອບຢູ່ໃຕ້ຕີນກາບໄຫວ້ທ່ານ" ກິຈະການ 10:25*

5. ໂປໂລ ແລະການປະກາດ

*ຄາວນັ້ນຄຣິສຕະຈັກທີ່ຢູ່ໃນເມືອງອັນຕີໂອເຂຍ ມີລາງຄົນເປັນຜູ້ປະກາດພຣະທຳແລະອາຈານ ຄືບາຣະນາບາ, ຊີເມໂອນຜູ້ເອີ້ນວ່ານີເຄັນ, ກັບລູກີໂອໄທເມືອງກີເຣເນ, ມານາເອນຜູ້ເປັນເພື່ອນສະໜິດ ກັບເຮໂຣດຜູ້ເປັນເຈົ້າເມືອງ, ແລະໂຊໂລ. ເມື່ອເຂົາກຳລັງປະຕິບັດນະມັດສະການອົງພຣະຜູ້ເປັນເຈົ້າ ແລະຖືສິນອົດອາຫານຢູ່ ພຣະວິນຍານບໍລິສຸດໄດ້ຊົງສັ່ງວ່າ, "ຈົ່ງຄັດເອົາບາຣະນາບາກັບໂຊໂລຕັ້ງໄວ້ໃຫ້ເຮົາ ສຳລັບການທີ່ເຮົາເອີ້ນໃຫ້ເຂົາເຮັດນັ້ນ." ເມື່ອຖືສິນອົດອາຫານແລະໄຫວ້ວອນແລ້ວກໍໄດ້ວາງມືໃສ່ບາຣະນາບາ ແລະໂຊໂລ ຈຶ່ງໃຫ້ເຂົາອອກໄປ. ກິຈະການ 13:1-3*

## ຄ. ທ່າທີເປັນກຸນແຈໃນການປະກາດ

1. ການຄືນດີກັນ ໝາຍເຖິງການນຳເອົາສອງພວກສອງຝ່າຍນັ້ນເຂົ້າມາກັບເປັນນຶ່ງດຽວອີກຄັ້ງນຶ່ງ

*"ທັງສິ່ນນີ້ເກີດມາຈາກພະເຈົ້າຜູ້ຊົງໃຫ້ເຮົາຄືນດີກັນກັບພະອົງທາງພະເຢຊູຄຣິດ ແລະຊົງໂປດປະທານໃຫ້ເຮົາມີພັນ ທະກິດເລື່ອງການຄືນດີກັນຄືພະເຈົ້າຊົງໃຫ້ໂລກນີ້ຄືນດີກັນກັບພະອົງໂດຍພະຄຣິດ ບໍ່ໄດ້ຊົງຖືໂທດໃນການຜິດຂອງ ເຂົາ ແລະ ຊົງມອບເລື່ອງການຄືນດີກັນນັ້ນໃຫ້ເຮົາປະກາດ"*
*2 ໂກຣິນໂທ 5:18-19*

*"ບັດນີ້ພະອົງຊົງໂປດໃຫ້ຄືນດີກັບພະອົງໂດຍຄວາມຕາຍແຫ່ງພະກາຍເນື້ອໜັງຂອງພະອົງ ເພື່ອຈະໄດ້ຖວາຍທ່ານແດ່ ພະເຈົ້າໃຫ້ເປັນຜູ້ບໍລິສຸດໄຮ້ມົນທິນ ແລະປັດສະຈາກຕຳນິ" ໂກໂລຊາຍ 1:22*

ພະເຈົ້າເປັນຜູ້ທີ່ເລີ້ມຕົ້ນການຄືນດີໃນຂ່າວປະເສີດ

*"ເພາະວ່າພະອົງຊົງເປັນສັນຕິສຸກຂອງເຮົາເປັນຜູ້ຊົງກະທຳໃຫ້ທັງສອງຝ່າຍເປັນອັນນຶ່ງອັນດຽວກັນ ແລະຊົງຮື້ ກຳແພງທີ່ກັ້ນລະຫວ່າງສອງຝ່າຍລົງຄືການເປັນປໍລະປັກກັນໂດຍໃນເນື້ອໜັງຂອງພະອົງ ໄດ້ຊົງໃຫ້ທຳບັນຍັດອັນ ປະກອບດ້ວຍບົດບັນຍັດແລະກົດໝາຍຕ່າງໆນັ້ນເປັນໂມຄະ ເພື່ອຈະກະທຳໃຫ້ທັງສອງຝ່າຍເປັນຄົນໃຫມ່ຄົນດຽວ ໃນພະອົງ ເຊັ່ນນັ້ນແຫລະຈຶ່ງຊົງກະທຳໃຫ້ເກີດສັນຕິສຸກ ແລະເພື່ອຈະຊົງກະທຳໃຫ້ທັງສອງພວກຄືນດີກັບພະເຈົ້າ ເປັນກາຍດຽວໂດຍກາງແຂນ ຊຶ່ງເປັນການເຮັດໃຫ້ການເປັນປໍລະປັກຕໍ່ກັນໝົດສິ້ນໄປ" ເອເຟໂຊ 2:14-16*

2. ການຍົກໂທດຄວາມບາບ

*"ພະອົງຊົງຊ່ວຍເຮົາໃຫ້ພົ້ນຈາກອຳນາດຂອງຄວາມມືດ ແລະໄດ້ຊົງຍ້າຍເຮົາມາຕັ້ງໄວ້ໃນແຜ່ນດິນ ແຫ່ງພະບຸດທີ່ຮັກຂອງພະອົງ ໃນພະບຸດນັ້ນເຮົາຈຶ່ງໄດ້ຮັບການໄຖ່ຊຶ່ງເປັນການຊົງໂປດຍົກບາບທັງ ຫລາຍຂອງເຮົາ" ໂກໂລຊາຍ 1:13-14*

*"ຖ້າເຮົາສາລະພາບບາບພະອົງຊົງສັດຊື່ແລະທ່ຽງທຳກໍຈະຊົງໂປດຍົກບາບຂອງເຮົາ ແລະຈະຊົງຊຳລະເຮົາໃຫ້ພົ້ນຈາກການ ອະທຳທັງສິ້ນ" 1 ໂຢຮັນ 1:9*

GCI

3. ເສລີພາບ

*"ແລະທ່ານທັງຫລາຍຈະຮູ້ຈັກສັດຈະ ແລະສັດຈະຈະເຮັດໃຫ້ທ່ານທັງຫລາຍເປັນອິດສະຫລະ" ໂຢຮັນ 8:32*

*"ເຫດສະນັ້ນຖ້າພະບຸດຊົງກະທຳໃຫ້ທ່ານທັງຫລາຍເປັນທ່ານ ທ່ານກໍເປັນອິດສະຫລະແທ້ໆ" ໂຢຮັນ 8:36*

*"ພະວິນຍານແຫ່ງພະເປັນເຈົ້າຊົງຢູ່ເໜືອຂ້າພະເຈົ້າເພາະວ່າພະອົງໄດ້ຊົງເຈີມຕັ້ງຂ້າພະເຈົ້າໄວ້ ເພື່ອນຳຂ່າວດີ ມາຍັງຄົນຍາກຈົນພະອົງໄດ້ຊົງໃຊ້ຂ້າພະເຈົ້າໃຫ້ຮ້ອງປະກາດອິດ ສະຫລະພາບແກ່ບັນດາຊະເລີຍໃຫ້ປະກາດແກ່ຄົນຕາບອດ ວ່າຈະໄດ້ເຫັນອີກໃຫ້ປ່ອຍຜູ້ຖືກບີບບັງຄັບໃຫ້ເປັນອິດສະຫລະ" ລູກາ 4:18*

# III. ພື້ນຖານຂອງການປະກາດ

## ກ. ຄວາມສຳຄັນຂອງການປະກາດ

1. ການປະກາດປະກອບໄປດ້ວຍສ່ວນພື້ນຖານ 2 ສ່ວນຄື:

ກ) ເພື່ອທີ່ຈະປະກາດ ສຳແດງອອກເຖິງຖ້ອຍຄຳແຫ່ງຂ່າວປະເສີດ

(1) ເຮົາຈຳເປັນຕ້ອງສຳແດງຖ້ອຍຄຳນີ້ຢ່າງຊັດເຈນ
"ເພື່ອຂ້າພະເຈົ້າຈະໄດ້ກ່າວຊີ້ແຈງຂໍ້ຄວາມຕາມສົມຄວນທີ່ຂ້າພະເຈົ້າຄວນຈະກ່າວນັ້ນ" ໂກໂລຊາຍ 4:4

(2) ເຮົາຕ້ອງອະທິຖານເພື່ອທີ່ຈະເຂົ້າໃຈຂ່າວປະເສີດຂອງພະເຈົ້າ
"ແຕ່ມີມ່ານບັງຂ່າວປະເສີດຂອງເຮົາໄວ້ຈາກໃຜກໍຈາກຄົນເຫລົ່ານັ້ນທີ່ກຳລັງຈະພິນາດ ສ່ວນຄົນທີ່ບໍ່ເຊື່ອນັ້ນພະຂອງຍຸກນີ້ໄດ້ເຮັດໃຫ້ໃຈຂອງເຂົາມືດໄປເພື່ອບໍ່ໃຫ້ເຂົາໄດ້ເຫັນ ຄວາມສະຫວ່າງຂອງ ຂ່າວປະເສີດ ເລື່ອງພະສິລິຂອງພະຄຣິດຜູ້ເປັນພະສາຍຂອງພະເຈົ້າ" 2 ໂກຣິນໂທ 4: 3 – 4

"ແລະຂໍໃຫ້ຕາຂອງທ່ານສະຫວ່າງຂຶ້ນເພື່ອທ່ານຈະໄດ້ຮູ້ວ່າ ໃນການທີ່ພະອົງຊົງເອີ້ນທ່ານນັ້ນ ພະອົງໄດ້ປະທານຄວາມຫວັງອັນໃດແກ່ທ່ານ ແລະຮູ້ວ່າມໍລະດົກ ຂອງພະອົງສຳລັບທຳມິກະຊົນມີສະຫງ່າລາສີອັນອຸດົມບໍລິບູນພຽງໃດ"

ຂ) ເພື່ອຈະຊັກຈູງຄົນນັ້ນໃຫ້ກັບໃຈໃຫມ່

*"ເພາະເຫດທີ່ເຮົາຢ້ານຢຳອົງພະຜູ້ເປັນເຈົ້າຢ່າງຈັບໃຈ ເຮົາຈຶ່ງຊັກຊວນຄົນທັງຫລາຍ ເຮົາເປັນຢ່າງໃດກໍເປັນທີ່ປະຈັກແກ່ພະເຈົ້າແລະຂ້າພະເຈົ້າຫວັງວ່າເຮົາໄດ້ປາກົດປະຈັກແກ່ຈິດສຳນຶກຜິດແລະຊອບຂອງທ່ານດ້ວຍ" 2 ໂກຣິນໂທ 5:11*

GCI

2. ການປະກາດຈຳເປັນຕ້ອງມີສູນກາງຢູ່ທີ່ພະວັດຈະນະຂອງພະເຈົ້າ ຫລືການອະທິບາຍພະວັດຈະນະຂອງພະເຈົ້າ

ກິຈະການ 8:26-35

ຟີລິບໄດ້ອະທິບາຍຈາກພະວັດຈະນະຂອງພະເຈົ້າໃຫ້ແກ່ຂັນທີຊາວເອທີໂອເປັຽ:

*"ຝ່າຍຟີລິບຈຶ່ງເລີ້ມເຫລົ່າຈັບຕົ້ນກ່າວຕາມພະຄຳພີຂໍ້ນັ້ນ ຊີ້ແຈງເຖິງຂ່າວປະເສີດເລື່ອງພະເຢຊູ" ກິຈະການ 8:35*

3. ການສະເຫນີ່າວປະເສີດ ນັ້ນຈະຕ້ອງມີການ**ຕັ້ງຄຳຖາມ**ຫລື ມີ**ຫົວຂໍ້**ທີ່ຊັດເຈນ
ກິຈະການ 17:16-34

*"ຝ່າຍໂປໂລຈຶ່ງຢືນຂຶ້ນກາງສະພາອາເຣໂອປາກັດແລ້ວກ່າວວ່າ "ດູກ່ອນທ່ານຊາວກຸງເອເທນ ໂດຍປະກາດຕ່າງໆ ຂ້າພະເຈົ້າເຫັນໄດ້ວ່າທ່ານທັງຫລາຍເປັນນັກສາດສະໜາ" ກິຈະການ 17:22*

4. ຂ່າວປະເສີດນັ້ນຈະຕ້ອງມີ**ເນື້ອຫາສາລະ**ຢ່າງຊັດເຈນ

*ແກ່ນແທ້ເລື່ອງຂອງຄຣິສຕະສາດສະໜາຄືເລື່ອງຂອງອົງພະເຢຊູຄຣິດ ເຮົາຈະຕ້ອງບໍ່ບອກກົດແຫ່ງສາດສະໜາ ຫລື ພິທີກຳດັ່ງທີ່ອາຈານໂປໂລປະກາດໄວ້ວ່າ "ເລື່ອງຊຶ່ງຂ້າພະເຈົ້າຮັບໄວ້ນັ້ນຂ້າພະເຈົ້າໄດ້ປະກາດແກ່ທ່ານທັງຫລາຍ ເປັນເລື່ອງສຳຄັນທີ່ສຸດຄືວ່າພະຄຣິດໄດ້ຊົງວາຍພະຊົນເພາະບາບຂອງເຮົາທັງຫລາຍຕາມທີ່ຂຽນໄວ້ໃນພະຄຳພີ ແລະ ຊົງຖືກຝັງໄວ້ ແລ້ວວັນທີ່ສາມພະອົງຊົງຖືກຊຸບໃຫ້ເປັນຂຶ້ນມາໃຫມ່ ຕາມທີ່ມີຂຽນໄວ້ໃນພະຄຳພີນັ້ນ" 1 ໂກຣິນໂທ 15:3-4*

ກ) ພະເຢຊູຄຣິດ

(1) ພະອົງຊົງເປັນ**ມະນຸດ**ທີ່ສົມບູນ ພະອົງຮູ້ຈັກເມື່ອຍ ແລະກະຫາຍນ້ຳ

*"ບໍ່ນ້ຳຂອງຢາໂຄບຢູ່ທີ່ນັ້ນພະເຢຊູຊົງດຳເນີນທາງມາອິດເມື່ອຍຈຶ່ງປະທັບລົງຂ້າງນ້ຳສ້າງເປັນເວລາປະມານທ່ຽງ" ໂຢຮັນ 4:6*

(2) ພະອົງຊົງເປັນ**ພະເຈົ້າ**ທີ່ສົມບູນ

*"ຜູ້ຊົງສະພາບພະເຈົ້າ ແຕ່ບໍ່ໄດ້ຊົງຖືວ່າການເທົ່າທຽມກັບພະເຈົ້ານັ້ນເປັນສິ່ງທີ່ຈະຕ້ອງຍຶດຖື" ຟີລິບປອຍ 2:6*

ຂ) ຄວາມຕ້ອງການຂອງມະນຸດ

1) ມະນຸດໄດ້ເຮັດ**ບາບ**ຕໍ່ພະເຈົ້າ
*"ເພາະວ່າທຸກຄົນເຮັດບາບແລະເສື່ອມຈາກພະລັດສະໝີຂອງພະເຈົ້າ" ໂຣມ 3:23*

2) **ຄ່າຈ້າງ**ຂອງຄວາມບາບ
*"ເພາະວ່າຄ່າຈ້າງຂອງຄວາມບາບຄືຄວາມຕາຍ ແຕ່ຂອງປະທານຈາກພະເຈົ້າຄືຊີວິດໃນພະເຢຊູ ຄຣິດອົງພະຜູ້ເປັນ ເຈົ້າຂອງ ເຮົາ" ໂຣມ 6:23*

GCI

ຄ) **ການປະທານໃຫ້**ຂອງພະເຈົ້າ

*"ແຕ່ພະເຈົ້າຊົງສຳແດງຄວາມຮັກຂອງພະອົງແກ່ເຮົາທັງຫລາຍ ຄືຂະນະທີ່ເຮົາຍັງເປັນຄົນບາບຢູ່ນັ້ນພະ ຄຣິດໄດ້ຊົງສິ້ນພະຊົນເພື່ອເຮົາ" ໂຣມ 5:8*

ງ) **ການຕອບສະໜອງ**ຂອງມະນຸດ

(1) **ກັບໃຈໃໝ່** – ກິຈະການ 2:38

(2) **ຍອມຮັບ**

*"ແຕ່ສ່ວນບັນດາຜູ້ທີ່ຕ້ອນຮັບພະອົງຜູ້ທີ່ເຊື່ອໃນພະນາມຂອງພະອົງ ພະອົງກໍຊົງປະທານສິດໃຫ້ເປັນບຸດຂອງພະເຈົ້າ" ໂຢຮັນ 1:12*

*"ຄືວ່າຖ້າທ່ານຈະຮັບດ້ວຍປາກຂອງທ່ານວ່າພະເຢຊູຊົງເປັນອົງພະຜູ້ເປັນເຈົ້າ ແລະເຊື່ອໃນຈິດ ໃຈວ່າ ພະອົງໄດ້ຊົງຊຸບພະອົງໃຫ້ເປັນຂຶ້ນມາຈາກຄວາມຕາຍທ່ານຈະພົ້ນ"ໂຣມ 10 :9*

ຂ. ຄວາມຈຳເປັນຂັ້ນພື້ນຖານຂອງຜູ້ເຊື່ອໃນການປະກາດ

1. ຜູ້ເຊື່ອນັ້ນຈະຕ້ອງມີ**ຄວາມໝັ້ນໃຈ**ວ່າ ພະຄຳພີນັ້ນເປັນພະຄຳຂອງພະເຈົ້າ

2 ຕີໂມທຽວ 3:16

2. ຜູ້ເຊື່ອນັ້ນຈະຕ້ອງທຸ້ມເທຕົວເອງໃນ**ການອະທິຖານ:**

*"ພະອົງກ່າວຄຳອຸປະມາເລື່ອງນຶ່ງໃຫ້ເຂົາຟັງເພື່ອສອນວ່າຄົນທັງຫລາຍຄວນອະທິຖານຢູ່ສະເໝີບໍ່ອ່ອນລະອາໃຈ" ລູກາ 18:1*

## IV. ການປະກາດເປັນສ່ວນນຶ່ງຂອງວິຖີຊີວິດ

ບົດນຳ:

"ຄຣິສຕຽນ ແລະຜູ້ທີ່ບໍ່ໄດ້ເປັນຄຣິສຕຽນ ມີສິ່ງໃດແດ່? ທີ່ຄືກັນ

ສິ່ງທີ່ຄືກັນ: ອາດຈະມີບ້ານທີ່ສົກກະປົກຮົກລຸງລັງ ການທຳຄວາມສະອາດສັດລ້ຽງ ປ້ອນອາຫານໃຫ້ກັບລູກໆ ຊຶ່ງບາງຄັ້ງລູກນັ້ນມີຄວາມປະພຶດທີ່ບໍ່ດີ

ການປະກາດທີ່ດີທີ່ສຸດນັ້ນຈຶ່ງບໍ່ເປັນພຽງແຕ່ການເວົ້າອອກມາຈາກປາກເທົ່ານັ້ນ ແຕ່ເປັນວິຖີຊີວິດທີ່ມີຄອບຄົວທີ່ມີຄວາມສຸກ ແລະມີຄຣິສຕະຈັກທີ່ແຂງແຮງ

ຄຣິສຕຽນນັ້ນເປັນອຸປະກອນທີ່ພະເຈົ້າມີ ເພື່ອທີ່ຈະຊັກຈູງຜູ້ທີ່ບໍ່ເຊື່ອມາຫາພະອົງໄດ້

ຄຳຖາມ: ທີ່ທ່ານຄວນຈະຖາມຕົວເອງ: ທ່ານເປັນຄຣິສຕຽນທີ່ມີຄວາມຊື່ນຊົມຍິນດີຫລືບໍ່?
ທ່ານມີຊີວິດຢູ່ຢ່າງເປັນແສງສະຫວ່າງສຳລັບພະຄຣິດຫລືບໍ່?

GCI

## *ກ. ພະເຢຊູເປັນແບບຢ່າງເປັນຮູບແບບທີ່ດີທີ່ສຸດໃນການປະກາດ*

1. ພະອົງຊົງເປັນ**ມະນຸດ**ເພື່ອທີ່ພວກເຂົາສາມາດທີ່ຈະຮູ້ຈັກພະເຈົ້າໄດ້

*"ພະທຳໄດ້ຊົງບັງເກີດເປັນມະນຸດ ແລະຊົງຢູ່ທ່າມກາງເຮົາບໍລິບູນດ້ວຍພະຄຸນ ແລະຄວາມຈິງເຮົາທັງຫລາຍ ໄດ້ເຫັນພະສິລິຂອງພະອົງ ຄືພະສິລິອັນສົມກັບພະບຸດອົງດຽວຂອງພະບິດາ" ໂຢຮັນ 1:14*

*"ພະເຢຊູກ່າວກັບເຂົາວ່າ "ຟີລິບເອີຍເຮົາໄດ້ຢູ່ກັບທ່ານດົນເຖິງພຽງນີ້ ແລະທ່ານຍັງບໍ່ຮູ້ຈັກເຮົາອີກຫລືຜູ້ທີ່ໄດ້ເຫັນ ເຮົາກໍໄດ້ເຫັນພະບິດາ ທ່ານຈະເວົ້າໄດ້ຢ່າງໃດອີກວ່າ "ຂໍສຳແດງພະບິດາໃຫ້ຂ້າພະອົງທັງຫລາຍເຫັນ" ໂຢຮັນ 14:9*

ພະເຢຊູບໍ່ພຽງແຕ່ເວົ້າເລື່ອງຄວາມຮັກຄວາມບໍລິສຸດ ແລະການຍົກໂທດເທົ່ານັ້ນແຕ່ພະອົງໄດ້ເຮັດສິ່ງນັ້ນໃຫ້ເກີດຂຶ້ນ ແກ່ຊີວິດຂອງພະອົງເອງ

*"ພະເຢຊູຊົງບໍລິບູນດ້ວຍພະຄຸນ ແລະຄວາມຈິງ " ໂຢຮັນ 1:14*

2. ເຮົາຈຳເປັນທີ່ຈະຕ້ອງຄືກັບພະອົງ ເພື່ອທີ່ຄົນບາບທັງຫລາຍຈະໄດ້ຮູ້ຈັກ**ອົງພະເຢຊູຄຣິດ**

*"ຂໍແຕ່ພຽງໃຫ້ທ່ານດຳເນີນຊີວິດໃຫ້ສົມກັບຂ່າວປະເສີດຂອງພະຄຣິດ ເພື່ອວ່າແມ່ນຂ້າພະເຈົ້າຈະມາຫາທ່ານຫລືບໍ່ກໍຕາມ ຂ້າພະເຈົ້າກໍຈະໄດ້ຮູ້ຂ່າວຈາກທ່ານວ່າ ທ່ານເຊື່ອໝັ້ນຄົງ ເປັນນ້ຳນຶ່ງໃຈດຽວກັນຕໍ່ສູ້ເໝືອນຢ່າງເປັນຄົນດຽວ ເພື່ອຄວາມເຊື່ອອັນເກີດຈາກຂ່າວປະເສີດນັ້ນ" ຟີລິບປອຍ 1:27*

ຊີວິດຂອງເຮົາຈະຕ້ອງປ່ຽນແປງໄປເພື່ອທີ່ຈະສະທ້ອນໃຫ້ເຫັນພາບຂອງພະຄຣິດຫລາຍຂຶ້ນທຸກວັນ

*"ແຕ່ເຮົາທັງຫລາຍບໍ່ມີຜ້າຄຸມໜ້າແລ້ວ ຈຶ່ງເບິ່ງພະສິລິຂອງອົງພະຜູ້ເປັນເຈົ້າ ແລະຕົວເຮົາກໍປ່ຽນໄປເປັນເໝືອນ ພະສາຍຂອງອົງພະຜູ້ເປັນເຈົ້າຄືມີສັກສີເປັນລຳດັບຂຶ້ນໄປ ເຊັ່ນສັກສີທີ່ມາຈາກອົງພະຜູ້ເປັນເຈົ້າຊຶ່ງເປັນພະວິນ ຍານ" 2 ໂກຣິນໂທ 3:18*

ສິ່ງທີ່ເຮົາກ່າວກ່ຽວກັບຫລັກສາສະໜາສາດ ອາດຈະບໍ່ສຳຄັນເທົ່າກັບສິ່ງທີ່ເຮົາສະແດງອອກມາໃຫ້ຄົນອື່ນເຫັນວ່າ ເຮົາມີຄວາມຮັກ ແລະເອື້ອອາທອນຕໍ່ຜູ້ອື່ນຫລາຍເທົ່າໃດ?

"ຖ້າ*ເຈົ້າທັງຫລາຍຮັກກັນແລະກັນ ດັ່ງນີ້ແຫລະຄົນທັງປວງກໍຈະຮູ້ໄດ້ວ່າເຈົ້າທັງຫລາຍເປັນສາວົກຂອງເຮົາ" ໂຢຮັນ 13:35*

ຜູ້ທີ່ບໍ່ເປັນຄຣິສຕຽນປາດຖະໜາທີ່ຈະອ່ານຊີວິດຂອງທ່ານຫລາຍກວ່າພະວັດຈະນະຂອງພະເຈົ້າ

*"ທ່ານເອງເປັນໜັງສືຂອງເຮົາຈາລຶກໄວ້ທີ່ດວງໃຈຂອງເຮົາໃຫ້ຄົນທັງປວງໄດ້ຮູ້ ແລະໄດ້ອ່ານ"
2 ໂກຣິນໂທ 3:2*

ຂ. ກຸນແຈແຫ່ງການປະກາດ

1. ຍຸດທະວິທີ ຂອງ**ອາຈານໂປໂລ**ໃນການປະກາດ ( 1 ໂກຣິນໂທ 9:19-23)

*"ຕໍ່ຄົນອ່ອນແອຂ້າພະເຈົ້າກໍເປັນຄົນອ່ອນແອ ເພື່ອຈະໄດ້ຄົນອ່ອນແອ ຂ້າພະເຈົ້າຍອມເປັນຄົນທຸກຊະນິດຕໍ່ຄົນທັງປວງ ເພື່ອຈະຊ່ອຍເຂົາໃຫ້ພົ້ນໄດ້ໂດຍທຸກວິທີທາງ" 1 ໂກຣິນໂທ 9:22*

ຍ່ອມຕ້ອງມີຄໍາວ່າ ການປ່ຽນແປງໃນການປະກາດເຊີງຣຸກ ແບບມີການປະກາດເລື່ອງຂອງການຊ່ອຍໃຫ້ພົ້ນ.

ກ) ໂປໂລນັ້ນເປັນຜູ້ທີ່ມີ**ຄວາມຢືດຍຸ່ນ.**

ໂປໂລຈໍາເປັນທີ່ຈະຕ້ອງໃຊ້ເວລາກັບຊາວຢິວຊຶ່ງມີກົດຕ່າງໆມາກມາຍ ແລະໃຊ້ເວລາອີກຊ່ວງເວລານຶ່ງກັບຊົນຕ່າງຊາດ ລອງນຶກສະພາບເຖິງການກິນຢູ່ ແລະນິໃສໃຈຄໍທີ່ແຕກຕ່າງກັນ ລະຫວ່າງຊາວຢິວ ແລະຊາວຕ່າງຊາດວ່າ ຈະຕ່າງກັນພຽງໃດ?

ຂ) ໂປໂລໄດ້ແບ່ງປັນຊີວິດຂອງເຂົາ ແລະສະແດງ**ຄວາມສົນໃຈ**ໃນຊີວິດຂອງຜູ້ອື່ນຢູ່ສະເໝີ.

*"ເມື່ອເຮົາຮັກທ່ານຢ່າງນີ້ແລ້ວ ເຮົາກໍມີໃຈພ້ອມທີ່ຈະເພື່ອແຜ່ເຈືອຈານ ບໍ່ແມ່ນແຕ່ພຽງຂ່າວປະເສີດຂອງພະເຈົ້າເທົ່ານັ້ນ ແຕ່ອຸທິດຕົວເຮົາໃຫ້ແກ່ທ່ານດ້ວຍ ເພາະທ່ານເປັນທີ່ຮັກຍິ່ງຂອງເຮົາ" 1 ເທຊະໂລນິກ 2:8*

2. ຍຸດທະວິທີຂອງ**ພະເຢຊູ**ໃນການປະກາດ ລູກາ: 19:1-9

ຕ້ອງຄົ້ນພົບຄວາມຕ້ອງການຂອງເຂົາກ່ອນທີ່ຈະແບ່ງປັນຂ່າວປະເສີດໃຫ້ແກ່ເຂົາ.

ພະເຢຊູໄດ້ເຫັນຄວາມຕ້ອງການຂອງສັກຄ່າຍ ສັກຄ່າຍເປັນຜູ້ເກັບພາສີ ຊຶ່ງເປັນທີ່ກຽດຊັງຂອງຄົນໃນສັງຄົມ ແຕ່ພະເຢຊູໄດ້ສະແດງຄວາມຮັກໃຫ້ແກ່ເຂົາເມື່ອພະເຢຊູອອກຈາກບ້ານສັກຄ່າຍ ສັກຄ່າຍນັ້ນເຕັມໃຈທີ່ຈະໃຫ້ຊັບເຄິ່ງນຶ່ງທີ່ເຂົາມີຢູ່ໃຫ້ກັບຄົນຍາກຈົນ.

ກ) ການພົບຄວາມ**ຕ້ອງການ**ຂອງຜູ້ອື່ນ:

(ກ) ຕອບສະໜອງຄວາມຕ້ອງການຂອງ**ນີໂກເດມ:** ຈະຕ້ອງບັງເກີດໃຫມ່

(ຂ) ຕອບສະໜອງຄວາມຕ້ອງການຂອງຍິງ**ຊາວສະມາເຣັຽ**
ພະອົງຊົງເປັນນໍ້າແຫ່ງຊີວິດ

(ຄ) ຕອບສະໜອງຄວາມຕ້ອງການຂອງ**ເສດຖີ**ໜຸ່ມ: ໃຫ້ຂາຍບັນດາສັບພະສິ່ງທີ່ເຂົາມີຢູ່ ແລະຕາມ ພະອົງໄປ

(ງ) ຕອບສະໜອງຄວາມຕ້ອງການຂອງ**ສັກຄາຍ**:ພະເຢຊູບໍ່ໄດ້ຕຮັດກັບເຂົາ "ໃຫ້ຂາຍຊັບສົມບັດທີ່ມີຢູ່ ແລະແບ່ງໃຫ້ຄົນຈົນເຄິ່ງນຶ່ງ" ແຕ່ພະອົງກ່າວວ່າ "ເຮົາຈະໄປບ້ານຂອງທ່ານໃນວັນນີ້"

GCI

ຂ) ແບບຢ່າງ: ພະເຢຊູຊົງໃຊ້ຊາຍແລະຍິງ ແລະພະອົງຊົງໃຊ້ເວລາກັບພວກເຂົາ ມາຣະໂກ 3:13–15

ຄ) ພັນທະກິດ:

(ກ) ແນວທາງພັນທະກິດ ໂດຍໃຊ້ການສັ່ງສອນ:

ພະເຢຊູຊົງໃຊ້ການສັ່ງສອນ - ໂຢຮັນ 8:31-32
ຄຣິສຕະຈັກໃນຍຸກທຳອິດໃຊ້ການສັ່ງສອນ - ກິຈະການ 2:42
ໂປໂລໃຊ້ການສັ່ງສອນ - ກິຈະການ 28:30–31

(ຂ) ແນວທາງທາງດ້ານກາຍະພາບ

ພະເຢຊູນັ້ນໄດ້ລ້ຽງຄົນທີ່ກຳລັງຫິວກະຫາຍ - ມາຣະໂກ 6:41; ຢາໂກໂບ 2:16

(ຄ) ແນວທາງພັນທະກິດທາງດ້ານການອັດສະຈັນ

ພະເຢຊູຄຣິດຊົງຮັກສາຄົນປ່ວຍ ແລະໄດ້ຂັບຜີເປັນຈຳນວນຫລາຍ - ກິຈະການ10:48

(ງ) ແນວທາງພັນທະກິດທາງດ້ານຈິດວິທະຍາ.

ພະເຢຊູໄດ້ໃຫ້ຄຳປຶກສາກັບຍິງຊາວສະມາເຣັຽ ແລະໄດ້ນຳລາວເຂົ້າສູ່ຄວາມພົ້ນ
- ໂຢຮັນ 4

ຄ. ການປະກາດ ແລະຄຣິສຕະຈັກ.

1. ໃນຖານະທີ່ເປັນ**ສິດຍາພິບານ.**

ກ) ໃນຖານະທີ່ເປັນສິດຍາພິບານໃຫ້ເຮົາໃຊ້**ໂອກາດ**ທຸກຢ່າງທີ່ຈະແບ່ງປັນຂ່າວປະເສີດໃນຂະນະທີ່ເຮົາເທດສະໜາ.
*"ຈົ່ງສອຍໂອກາດ ເພາະວ່າທຸກວັນນີ້ເປັນການທີ່ຊົ່ວ" ເອເຟໂຊ 5:16*

ເຮົາສາມາດໃຊ້ໂອກາດມາກມາຍໃນການແບ່ງປັນຂ່າວປະເສີດ:

(ກ) ໃນຊ່ວງເລວາການຮັບ**ສິນບັບຕິສມາ.**

(ຂ) ໃນຊ່ວງເວລາ**ຖວາຍຕົວ**ໃນຊ່ວງເວລາທີ່ເປັນອະນຸຊົນ.

(ຄ) **ການແຕ່ງງານ.**

(ງ) **ງານສົບ.**

(ຈ) **ການຢ້ຽມຢາມ**ຜູ້ປ່ວຍໃນໂຮງພະຍາບານ.

(ສ) **ການຢ້ຽມ**ຜູ້ເຊື່ອທີ່ເຮືອນ.

GCI

(ຊ) ການຕັ້ງແຕ່ກຸ່ມຍ່ອຍໆ ຍົກຕົວຢ່າງ ການເຂົ້າຄ້າຍຄອບຄົວ.

ຂ) ເລີ້ມຕົ້ນທີ່ຈະມີການສຶກສາພະຄຳພີເປັນກຸ່ມກ່ຽວກັບການປະກາດ.

(ກ) ການສຶກສາພະຄຳພີກ່ຽວກັບຂ່າວປະເສີດ.

(ຂ) ການສຶກສາຄຳຖາມທີ່ຄິດວ່າ ຜູ້ທີ່ເຮົາປະກາດຢູ່ຈະຕາມເຮົາ.

: ມີຊີວິດຫລັງຄວາມຕາຍໄດ້ບໍ່?
: ເຮົາຈະຖືກຍົກບາບໄດ້ຢ່າງໃດ?

ຄ) ການຝຶກຝົນອົບຮົມໃຫ້ສະມາຊິກເກີດການປະກາດຫລາຍຂຶ້ນ.

*"ຈົ່ງມອບຄຳສອນເຫລົ່ານັ້ນ ຊຶ່ງທ່ານໄດ້ຍິນຈາກຂ້າພະເຈົ້າຕໍ່ໜ້າພະຍານຫລາຍຄົນໄວ້ກັບຄົນທີ່ຊື່ສັດທີ່ ສາມາດສອນຄົນອື່ນໄດ້" 2 ຕີໂມທຽວ 2:2*

ງ) ມີຂໍ້ມູນແຫລ່ງຄົ້ນຄວ້າ ຫລື ໜັງສືໃຫ້ພຽງພໍສຳລັບສະມາຊິກເພື່ອທີ່ຈະໃຊ້
ໂຢຮັນ 20:31

ປະມານ85% ຂອງຄຣິສຕຽນໃນອາເມລິກາລາຕິນທີ່ກາຍເປັນຄຣິສຕຽນ ເພາະຜົນຈາກການອ່ານໜັງສື ແລະໃບປີວ.

ຂໍ້ດີຂອງສິ່ງພິມເຫລົ່ານີ້:

(ກ) **ມີຄວາມເປັນຖາວອນ.**

(ຂ) **ສາມາດເອີ້ນຄວາມສົນໃຈໄດ້ຫລາຍຄັ້ງ.**

(ຄ) **ເຮັດໄດ້ເປັນຈຳນວນຫລາຍ.**

(ງ) **ມີອັດຖາປະສິງທີ່ແນ່ນອນ.**

ຈ. **ລາຄາຕົ້ນທຶນຖືກກວ່າ.**

ຈ) ເລີ້ມຕົ້ນທີ່ຈະກະຕຸ້ນໜູນໃຈສະມາຊິກທີ່ຈະທຳງານໄດ້ຢ່າງດີທີ່ສຸດ ຢາໂກໂບ 2:14-15

ສ) ໃຊ້ດົນຕຣີເປັນສື່ໃນການປະກາດ 1 ຊາມູເອນ 16:23

2. ໃນຖານະທີ່ເປັນຄຣິສຕະຈັກ.

ກ) ເຮົາຈະຕ້ອງສາມາດຮັບການປ່ຽນແປງໄດ້.

ສະເຕເຟນເປັນຄົນທີ່ມີຄວາມສາມາດໃນການປະກາດ ແລະເຮັດໃຫ້ຫລາຍຄົນໄດ້ມາເຖິງພະເຈົ້າໄດ້.

(ກ) ເຂົາສອນວ່າ ພະເຈົ້ານັ້ນບໍ່ໄດ້ຢູ່ໃນຕຶກໃນພະວິຫານ.

GCI

(ຂ) ເຂົາໄດ້ສັ່ງສອນກົງກັນຂ້າມກັບທຳບັນຍັດ (ກິຈະການ 6:13-14)

ທີ່ພະວິຫານນັ້ນບໍ່ໄດ້ພ້ອມທີ່ຈະຮັບການປ່ຽນແປງ ແລະບໍ່ພໍໃຈທີ່ສະເຕເຟນໄດ້ເຮັດຢ່າງນັ້ນພວກເຂົານັ້ນໄດ້ເອົາຫີນແກ່ວງໃສ່ສະເຕເຟນໃຫ້ຕາຍ ບາງຄັ້ງການປະກາດນັ້ນກໍເປັນອຸປະສັກ ເນື່ອງຈາກວ່າ ທາງຄຣິສຕະຈັກບໍ່ພ້ອມທີ່ຈະເປີດຕໍ່ການປ່ຽນແປງ.

ຕົວຢ່າງ: ຄຣິສຕະຈັກແຫ່ງນຶ່ງໃນປະເທດສະຫະລັດອະເມລິກາ ໃນວັນອາທິດນັ້ນພວກເຂົາໄປປະກາດໃນສະໜາມແຂ່ງລົດ ແລະມີຫລາຍຄົນເຊື່ອໃນຂ່າວປະເສີດ ແລະເປີດໃຈຮັບເອົາອົງພະເຢຊູຄຣິດ.

ຂ) ເຮົາຈຳເປັນທີ່ຈະຕ້ອງນຳຜູ້ເຊື່ອມາກ່ຽວຂ້ອງກັບງານໃນຄຣິສຕະຈັກ ເພາະງານຮັບໃຊ້ນັ້ນບໍ່ແມ່ນມີພຽງແຕ່ສິດຍາພິບານ ຫລື ຜູ້ປົກຄອງເທົ່ານັ້ນ.

*"ເພື່ອຕຽມທຳມິກະຊົນໃຫ້ເປັນຄົນທີ່ຈະຮັບໃຊ້ ເພື່ອເສີມສ້າງພະກາຍຂອງພະຄຣິດໃຫ້ຈຳເລີນຂຶ້ນ"*
*ເອເຟໂຊ 4:12*

**<u>ໜັງສືອ້າງອີງ</u>:**


Joseph C. Aldrich, *Lifestyle Evangelism* (Portland, Oregon: Multnomah Press, 1981).

Lewis A. Drummond, *The Word of the Cross* (Tennessee: Broadman Press, 1992).

Michael Green, *Evangelism Through the Local Church* (Nashville, Tennessee: OliverNelson Books, 1992).

Ralph G. Turnbull, *Evangelism Now* (Michigan: Baker Book House, 1972).